# ການກັບຄືນໄປເຮັດວຽກ

**ສໍາຄັນ:** ຂໍ້ກໍານົດການຊອກຫາວຽກແມ່ນກັບຄືນມາມີຜົນບັງຄັບໃຊ້. ເລີ່ມກິດຈະກໍາການຊອກຫາວຽກໃນອາທິດຂອງວັນທີ 4 ກໍລະກົດ - ວັນທີ 10 ກໍລະກົດ. ໄປທີ່ **ໜ້າຂໍ້ກໍານົດການຊອກຫາວຽກ** ສໍາລັບຂໍ້ມູນເພີ່ມເຕີມ.

,ເພື່ອສະໜັບສະໜູນແຮງງານ ແລະ ທຸລະກິດກັບການບໍລິການສໍາລັບຄົນຫວ່າງງານ ແລະ ການຈ້າງງານຄືນໃໝ່ ພວກເຮົາສະໜອງ:

- ໂອກາດທາງອາຊີບ ແລະ ການຝຶກອົບຮົມສໍາລັບແຮງງານ.
- ຊັບພະຍາກອນເພື່ອຮັກສາແຮງງານທີ່ມີທັກສະສໍາລັບຜູ້ຈ້າງງານ.
- ຂໍ້ມູນກ່ຽວກັບເງື່ອນໄຂສິດຜົນປະໂຫຍດການວ່າງງານ, ການດໍາເນີນກິດຈະກໍາການຊອກຫາວຽກ,
- ຂໍ້ສະເໜີໃນການກັບຄືນໄປເຮັດວຽກ
- ອື່ນໆອີກ.

## ຂໍ້ມູນສໍາລັບແຮງງານ

## ທ່ານຖືກຮຽກໃຫ້ກັບຄືນໄປເຮັດວຽກ ແຕ່ບໍ່ສາມາດກັບຄືນໄດ້ບໍ?

ຖ້າໃນປັດຈຸບັນ ທ່ານກໍາລັງຮັບຜົນປະໂຫຍດສໍາລັບການວ່າງງານ ແລະ ບໍ່ສາມາດກັບຄືນໄປເຮັດວຽກ ເມື່ອຖືກຮຽກໃຫ້ກັບຄືນໄປເຮັດວຽກ (ບໍ່ວ່າຈະເປັນຈາກວຽກເກົ່າ ຫຼື ວຽກໃໝ່), ພວກເຮົາຢູ່ທີ່ນີ້ເພື່ອຊ່ວຍໃຫ້ທ່ານຊອກຫາທາງອອກ. ຊອກຫາເພີ່ມເຕີມກ່ຽວກັບເວລາທີ່ທ່ານສາມາດປະຕິເສດໂອກາດໃນການກັບຄືນໄປເຮັດວຽກທີ່ .

# ຄົ້ນຫາອາຊີບຕໍ່ໄປ ຂອງທ່ານ

## WorkSource ຢູ່ທີ່ນີ້ເພື່ອຊ່ວຍທ່ານ

- ຄົ້ນຫາຕໍາແໜ່ງວຽກທີ່ເໝາະສົມໄດ້ທີ່ WorkSource Washington (ເປັນພາສາອັງກິດ). ເນື່ອງຈາກວິກິດການ, ປັດຈຸບັນຫ້ອງການ WorkSource ທົ່ວປະເທດຖືກປິດການບໍລິການແບບຕົວຕໍ່ຕົວ, ແຕ່ທ່ານຍັງສາມາດຂໍຄວາມຊ່ວຍເຫຼືອໄດ້ໂດຍການໂທຫາຫ້ອງການໃນທ້ອງຖິ່ນຂອງທ່ານ ຫຼື ຖາມຄໍາຖາມຜ່ານການສົນທະນາສົດ. ໄປທີ່ WorkSourceWA.com (ເປັນພາສາອັງກິດ) ສໍາລັບຂໍ້ມູນເພີ່ມເຕີມ.

- ສໍາຫຼວດວຽກ ແລະ ໂອກາດໃນການຝຶກອົບຮົມເພີ່ມເຕີມຜ່ານທາງ ລະບົບ WorkSource (ເປັນພາສາອັງກິດ).

- •ປັບປຸງທັກສະຂອງທ່ານໃຫ້ເຂົ້າກັບວຽກໄດ້ WorkSourceWA ກອງປະຊຸມທີ່ຈະມາເຖິງ (ເປັນພາສາອັງກິດ) ໃນທ້ອງຖິ່ນຂອງທ່ານ.
- ເພື່ອໃຫ້ໄດ້ວຽກທີ່ເໝາະສົມ, ເຂົ້າຮ່ວມ ງານເທດສະການຈ້າງຫາງານ (ເປັນພາສາອັງກິດ).

## ການຝຶກອົບຮົມອາຊີບຄືນ ຫຼື ໂອກາດທາງການສຶກສາ

- ຊອກຫາການສຶກສາ ແລະ ການຝຶກອົບຮົມທີ່ທ່ານຕ້ອງມີ ເພື່ອຮັບວຽກທີ່ທ່ານຕ້ອງການທີ່ Washington Career Bridge (ເປັນພາສາອັງກິດ).
- ຖ້າທ່ານກໍາລັງພິຈາລະນາທີ່ຈະກັບຄືນໄປເຮັດວຽກ ຫຼື ຮັບການສຶກສາເພີ່ມ, ໃຫ້ໄປທີ່ College & Career Compass Washington (ເປັນພາສາອັງກິດ).
- ໄປທີ່ໜ້າ ຮຽນຮູ້ກ່ຽວກັບອາຊີບ (ເປັນພາສາອັງກິດ) ຂອງພວກເຮົາ ສໍາລັບຄໍາອະທິບາຍອາຊີບ, ຂໍ້ກໍານົດການສຶກສາ, ຄ່າຈ້າງ, ແນວໂນ້ມການຈ້າງງານ ແລະ ຊັບພະຍາກອນ ຫຼື ເພື່ອຊອກຫາອາຊີບ.

## ຮຽນຮູ້ເພີ່ມເຕີມກ່ຽວກັບອຸດສາຫະກໍາທີ່ກໍາລັງຈ້າງງານ.

- ເບິ່ງທີ່ ລາຍງານອຸປະສົງ/ອຸປະທານ (ເປັນພາສາອັງກິດ) ຂອງພວກເຮົາ ສໍາລັບການວິເຄາະຊ່ອງວ່າງດ້ານອາຊີບພ້ອມທັງການປຽບທຽບການເປີດຮັບສະໝັກວຽກປະຈໍາເດືອນຜ່ານອອນລາຍ ແລະ ຂໍ້ມູນຂອງພະແນກຄວາມປອດໄພໃນການຈັດຈ້າງງານກ່ຽວກັບຜູ້ອ້າງສິດຮັບເອົາປະກັນໄພການວ່າງງານ.
- ໄປທີ່ ໜ້າອາຊີບ ແລະ ການຝຶກອົບຮົມ (ເປັນພາສາອັງກິດ) ຂອງພວກເຮົາ ສໍາລັບຂໍ້ມູນເພີ່ມເຕີມໃນການຊອກຫາວຽກ.

*ພະແນກຄວາມປອດໄພໃນການຈັດຈ້າງງານເປັນຜູ້ຈ້າງງານ/ໂຄງການທີ່ໃຫ້ຄວາມເທົ່າທຽມດ້ານໂອກາດ. ມີຄວາມຊ່ວຍເຫຼືອ ແລະ ການບໍລິການເພີ່ມໃຫ້ແກ່ບຸກຄົນທີ່ພິການ ເມື່ອມີການຮ້ອງຂໍ. ການບໍລິການຄວາມຊ່ວຍເຫຼືອດ້ານພາສາ ສໍາລັບບຸກຄົນທີ່ມີຄວາມຊໍານານດ້ານພາສາອັງກິດທີ່ຈໍາກັດແມ່ນມີໃຫ້ໂດຍບໍ່ເສຍຄ່າ. ການບໍລິການສື່ງຜ່ານຂອງລັດ Washington : 711*